ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຜ-ຟຟລ ໄດ້ຮັບລາງວັນ Asia's Best Performing Companies ໃນງານ Asia Corporate Excellence & Sustainability Awards (ACES) 2018

ໃນວັນທີ 11 ຕຸລາ 2018, ຜ-ຟຟລ ໄດ້ຮັບລາງວັນຜົນງານດີເດັ່ນໃນສາຂາ Asia's Best Performing Companies ພາຍໃຕ້ ພິທີມອບລາງວັນທຸລະກິດທີ່ດີເດັ່ນ ແລະ ຍືນຍົງແຫ່ງອາຊີ (Asia Corporate Excellence & Sustainability Award) ປະຈຳປີ 2018 ຊຶ່ງມອບໂດຍ MORS, ທີ່ປະເທດສິງກະໂປ. ຜ-ຟຟລ ເປັນພຽງ 1 ໃນ 5 ບໍລິສັດໃນອາຊີໃນປີນີ້ທີ່ເປັນຜູ້ຊະນະໃນສາຂາລາງວັນນີ້. ລາງວັນດັ່ງກ່າວມອບໃຫ້ກັບ ບັນດາວິສາຫະກິດທີ່ໄດ້ມີຜົນງານທີ່ດີເດັ່ນໃນການຂະຫຍາຍທຸລະກິດໃນໄລຍະຜ່ານມາ ແລະມີທ່າແຮງກາຍເປັນ ບໍລິສັດຂະໜາດໃຫຍ່ຂອງອາຊີໃນອະນາຄົດ. ການຮ່ວມຮັບລາງວັນຄັ້ງນີ້ ໄດ້ນຳໂດຍ ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອຳນວຍການໃຫຍ່ ຜ-ຟຟລ, ແລະ ທ່ານ ດຣ. ບຸນສະຫງວງ ສຸດທິດາຣາ, ຮອງຜູ້ອຳນວຍການໃຫຍ່ສາຍງານການເງິນ ຜ-ຟຟລ.





